# ຮ່ວມໃຈປູກຕົ້ນໄມ້



# ຮ່ວມໃຈປູກຕົ້ນໄມ້

ຂຽນເລື່ອງໂດຍ ອຸທິນ ບຸນຍາວົງ

ຮູບປະກອບໂດຍ ສ. ສະໄຫວ

ຈັດພິມໂດຍ

ກົມວັນນະຄະດີ

ໂດຍຄວາມອຸປະຖຳ ຂອງ ອົງການ "ໂຮງຮຽນບໍ່ມີຊາຍແດນ"

1990

ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ

ທະບຽນ ອະນຸມັດ ເລກທີ 178/ພ.ຈ.ໜ.ປ.

ລົງວັນທີ 10.9.1990

# ຮ່ວມໃຈປູກຕົ້ນໄມ້

ພິມເທື່ອທຳອິດ ຈຳນວນພິມ 5000 ຫົວ

ພິມທີ່ ວິສາຫະກິດການພິມຈຳໜ່າຍສຶກສາ.

ມື້ພັກໂຮງຮຽນ ພວກນ້ອງນ້ອຍ ພາກັນມາປູກ
ຕົ້ນໄມ້ໃນສວນນີ້ເລື້ອຍໆ. ສວນບໍ່ຢູ່ໄກໂຮງຮຽນ ປານໃດ.





ຕົ້ນໄມ້ ທີ່ພວມເບິ່ງໜ່ວຍຢູ່ນີ້ ແມ່ນຕົ້ນໝາກຕ້ອງ.

ທຸກຄົນອອນຊອນທີ່ເຫັນໜ່ວຍມັນຫ້ອຍຕ້ອນແຕ້ນຢູ່.

ຫຼາຍຄົນ ເອົາມືລູບຄຳເບິ່ງ ແຕ່ໝາກຕ້ອງຍັງໜ່ວຍຂຽວຢູ່ ຈຶ່ງບໍ່ໄດ້ປີດເອົາ. ສ່ວນໜ່ວຍເຫຼືອງ ກໍ່ມີພຽງສອງ ຫຼື ສາມ ໜ່ວຍເທົ່ານັ້ນ.





ພວກນ້ອງນ້ອຍ ເວົ້າກັນວ່າ ໃຫ້ໝາກຕ້ອງສຸກ ພ້ອມກັນ ຫຼາຍໆ ໜ່ວຍສາກ່ອນ ແລ້ວຈຶ່ງປິ່ດເອົາມາປັ່ນ ກັນກິນ. ອາທິດໜ້າ ໝາກຕ້ອງຄົງຈະສຸກເຫຼືອງເຕັມຕົ້ນ.



ທ້າວ ບຸນແພງ ຜູ້ເປັນຫົວໜ້າໝູ່ເວົ້າວ່າ: "ພວກເຮົາແບ່ງເປັນສອງຈຸ. ຈຸທີໜຶ່ງຖາງຫຍ້າ, ຈຸທີສອງຂຸດຂຸມໄວ້ປູກຕົ້ນໄມ້."



ຫ້າມຈຳໜ່າຍ

ພວກນ້ອງນ້ອຍໃຊ້ພ້າຖາງຫຍ້າ. ເຂົາເຈົ້າລືມກັນວ່າ ຕ້ອງ ພື່ນຢ່າງລະມັດລະວັງ ເພື່ອບໍ່ໃຫ້ພ້າໄປຖືກໝູ່.

ເຂົາເຈົ້າໃຊ້ຈົກຂຸດດິນເພື່ອປູກຕົ້ນໄມ້. ຢູ່ບ່ອນນີ້ ເຂົາເຈົ້າຊ່ວຍກັນແປງໜ້າດິນ ໃຫ້ຮາບພຽງກ່ອນ ແລ້ວຈຶ່ງ ຂຸດເປັນຂຸມ.



ເມື່ອເຮັດວຽກເມື່ອຍແລ້ວ ພວກນ້ອງນ້ອຍ ກໍ່ພັກ
ຜ່ອນ, ທ້າວບຸນແພງ ເວົ້າກັບໝູ່ວ່າ ; " ຄ່ອຍໆ ເຮັດໄປ,
ຢ່າພ້າວພັ່ງ ເພາະຢ້ານຈິກ ຫຼື ພ້າໄປຖືກໝູ່."



ທ້າວ ບຸນແພງ ເອົາຢາໃສ່ຖົງມາພ້ອມ ຄືຢາໃສ່ບາດ

ຜ້າພັນບາດ ຢາແກ້ເຈັບທ້ອງ.





ລາວວ່າ ຖ້າມີໝູ່ຜູ້ໃດຜູ້ໜຶ່ງ ເຈັບກະທັນຫັນ ກໍ່ປິ່ນປົວກັນຊ່ຳຊາ ກ່ອນຈະສົ່ງໂຮງໝໍ.



ຕອນທ່ຽງ ພວກນ້ອງນ້ອຍພາກັນກິນເຂົ້າ ຢູ່ກ້ອງຮົ່ມໄມ້. ເຂົາເຈົ້າດີໃຈທີ່ໄດ້ມາຢູ່ທ່າມກາງ ທຳມະຊາດ. ທຸກໆຄົນ ກິນເຂົ້າແຊບ.



ຫຼັງຈາກ ກິນເຂົ້າແລ້ວ ທ້າວ ບຸນແພງ ຍ່າງໄປທີ່ກ້ອງຕົ້ນ ໝາກຕ້ອງ. ລາວສັງເກດເຫັນວ່າ ໝາກຕ້ອງໜ່ວຍໜຶ່ງເສຍໄປ ຍັງເຫຼືອແຕ່ຂວັ້ນ.

ລາວຊອກເບິ່ງຕາມກ້ອງຕົ້ນໝາກຕ້ອງ ແລະ ເຂົາ ອ້ອມແອ້ມແລ້ວກໍ່ໄປພົ້ເບື່ອກໝາກຕ້ອງ. ອັນນີ້ສະແດງວ່າ ມີຜູ້ລັກກິນ ໝາກຕ້ອງ.





ທ້າວ ບຸນແພງ ບອກໃຫ້ໝູ່ຮູ້ວ່າ ມີຜູ້ເອົາໝາກຕ້ອງ ໄປກິນ, ຖ້າຜູ້ໃດກິນນັ້ນ ໃຫ້ບອກມາຊື່ໆ ແລ້ວຈະບໍ່ຖືວ່າ ມີຄວາມຜິດຫຍັງ.

ບໍ່ມີໃຜຈັກຄົນ ຍອມຮັບວ່າ ກິນເອງໄດ້ກິນ. ທ້າວ ບຸນແພງ ຈຶ່ງເວົ້າຕໍ່ໄປວ່າ : " ໝາກຕ້ອງເສຍໜ່ວຍດຽວ ບໍ່ເປັນຫຍັງ, ຢ້ານແຕ່ຜູ້ທີ່ກິນນັ້ນເຈັບທ້ອງຕາຍ ເພາະປູ່ຍ່າ ເຄີຍເລົ່າວ່າ ຜູ້ໃດລັກກິນໝາກໄມ້ໃນສວນນີ້ ມັກເຈັບທ້ອງຕາຍທຸກຄົນ. ຖ້າຜູ້ໃດຍອມຮັບວ່າ ໄດ້ເອົາໄປກິນ ຜູ້ນັ້ນກໍ່ຈະບໍ່ເປັນຫຍັງເລີຍ. "



ທ້າວ ບຸນແພງ ເອົາຢາແກ້ເຈັບທ້ອງ ຢາຍໃຫ້ໝູ່ຄົນ ລະເມັດ ທັງບອກວ່າ : " ຖ້າຜູ້ໃດເຈັບທ້ອງ ໃຫ້ກິນຢາ ນີ້ໂລດ, ຜູ້ໃດທີ່ລັກກິນໝາກຕ້ອງ ກໍ່ໃຫ້ກິນຢາກັນໄວ້ໂລດ ຢ້ານວ່າ ຖ້າເຈັບທ້ອງແທ້ໆ ມັນຊິປິ່ວຍາກ " .





ເວລາຜ່ານໄປດົນເຕີບ ທ້າວ ບຸນແພງ ຍ່າງໄປທີ່ ກ້ອງຕົ້ນໝາກຕ້ອງ ແລ້ວເອີ້ນໝູ່ເຂົ້າໄປຫາເທື່ອລະຄົນ.

ຜູ້ທີ່ໜຶ່ງທີ່ເຂົ້າໄປຫາ ແມ່ນ ທ້າວ ແກ້ວ.

ທ້າວ ບຸນແພງ ຖາມຫາຢາເມັດນຳທ້າວແກ້ວ.

" ນີ້ເດ " ທ້າວແກ້ວ ຈົກເອົາຢາຈາກຖົງເສື້ອສົ່ງຄືນ.





ທ້າວ ຄຳ ເຂົ້າໄປຫາເບັ່ນຄົນທີສອງ.   ລາວຍັງມີຢາ

ເມັດນັ້ນຢູ່ໃນຖົງເສື້ອ.  ລາວບໍ່ໄດ້ກິນ ເພາະບໍ່ເຈັບທ້ອງ.

ຄົນທີສາມ ແມ່ນທ້າວຕອມ. ລາວບອກທ້າວ ບຸນແພງ ວ່າ ເຮັດຢາເມັດນັ້ນເສຍແລ້ວ ແຕ່ທ້າວ ບຸນແພງ ບໍ່ເຊື່ອ. “ໂຕກິນຢາແມ່ນບໍ່ ?” ທ້າວ ບຸນແພງ ສໍ້ຖາມ. “ຂ້ອຍ ຂ້ອຍ ກິນຢາ ແມ່ນລະ” ທ້າວຕອມ ເວົ້າສຽງກະຕຸກກະຕັກ ເພາະຮູ້ວ່າ ຕົນເອງເຮັດຜິດ.



ທ້າວ ບຸນແພງ ສໍ້ຕົ່ມ :

" ເພາະກິນໝາກຕ້ອງ ເລີຍກິນຢາກັນໄວ້ ບໍ່ໃຫ້ເຈັບທ້ອງແມ່ນບໍ່ ? "

ທ້າວຕອມ ຍອມຮັບວ່າ :

" ເອີ ເອີ ຂ້ອຍກິນໝາກຕ້ອງ ຢ້ານເຈັບທ້ອງຈຶ່ງກິນຢາກັນໄວ້."





ທ້າວ ບຸນແພງ ເວົ້າຍ້ອງຍໍທ້າວຕອມທີ່ເຮັດຜິດ

ແລ້ວຍອມ ຮັບສາລະພາບ

ທຸກຄົນຍິນດີໃຫ້ອະໄພແກ່ທ້າວຕອມ.



ທ້າວ ຕອມ ສຳນຶກຜິດ ແລ້ວກໍ່ບອກໝູ່ວ່າ ຈະຂໍ ປູ່ກຕົ້ນໄມ້ໃສ່ ສວນນີ້ໃຫ້ຫຼາຍໆ.



ພວກນ້ອງນ້ອຍພາກັນປູກຕົ້ນໄມ້ຈຳນວນຫຼາຍ ມີຕົ້ນໝາກມ່ວງ ໝາກມີ້ ໝາກຂາມ ໝາກລຳໄຍ ໝາກນ້ຳນົມ ແລະ ໝາກຕ້ອງ.



ເມື່ອປູກແລ້ວ ຕົ້ນໃດ ເຂົາເຈົ້າກໍ່ເອົານ້ຳມາຫົດ ເພື່ອໃຫ້ ເບ້ຍຕົ້ນໄມ້ສົດຊື່ນ. ທຸກຄົນເຮັດວຽກຢ່າງຫ້າວຫັນ.



ຫ້າມຈຳໜ່າຍ

ພວກນ້ອງນ້ອຍພູມໃຈຫຼາຍ ທີ່ໄດ້ປູ່ກຕົ້ນໄມ້ໄວ້ ເພາະມື້ໜຶ່ງ ໃນອະນາຄົດ ຕົ້ນໄມ້ທີ່ປູ່ກໃນມື້ນີ້ຈະເປັ່ນໜ່ວຍ ໃຫ້ເຂົາເຈົ້າກິນ ແລະ ເປັ່ນຮົ່ມໃຫ້ເຂົາເຈົ້າຊົ້ນ.

ເຂົາເຈົ້າເວົ້າວ່າ : ຕົ້ນໄມ້ມີຄຸນປະໂຫຍດຫຼາຍ.

1990

# ການສຶກສາ ເພື່ອໝົດທຸກຄົນ

# ECOLES SANS FRONTIERES

ພິມທີ່ວິສາຫະກິດການພິມຈຳໜ່າຍສຶກສາ